# ...ໂຄງການໃນມູມນຶງ...



...ສ້າງສິ່ງທີ່ມ່ວນຊື່ນ...



...ຫຼີ້ນເກມ...



...ຊ່ວຍເຫຼືອປະຊາຄົມ...



...ເຮັດແຜນການທີ່ມ່ວນໆ...



...ສ້າງເພື່ອນຝູງທີ່ຮັກແພງ...



...ຮຽນຮູ້ກ່ຽວກັບວັທນະທັມ...

## ...ແລະອື່ນໆອີກຫຼາຍຢ່າງ...



## ຫຼິ້ນ




## ຮຽນຮູ້




## ເຕີບໂຕ

## ອົງການລາວເພືອຄວາມກ້າວຫນ້າ ໃນສະຫະຣັຖ

ໂຄງການເພື່ອຊາວຫນຸ່ມ ແລະເຍົາວະຊົນ
ສູນວັທນະທັມລາວ
2648 West Broadway Avenue
Minneapolis, Minnesota 55411
Tel: 612.302.9048 | Fax: 612.522.2431
Email: laoamerica@laoamerica.org

# ຫຼິ້ນ, ຮຽນຮູ້, ເຕີບໂຕ

# ໂຄງການ ເພືອຊາວຫນຸ່ມ ແລະເຍົາວະຊົນທີ ລາວອະເມຣິກາ




ລາວອະເມຣິກາ

**ເດັກນ້ອຍໃນວັນນີ້ ຄືຜູ້ໃຫຍ່ໃນວັນຫນ້າ!**

# ໂຄງການເພື່ອຊາວໜຸ່ມ ແລະເຍົາວະຊົນ ຂອງອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖໄດ້ຈັດໃຫ້ມີຂຶ້ນ ທີ່ສູນວັທນະທັມລາວ ທີ່ເປັນສະຖານທີ່ ທີ່ເດັກນ້ອຍເຍົາວະຊົນສາມາດຫຼິ້ນ, ຮຽນຮູ້ ແລະເຕີບໂຕໄດ້

ໂຄງການເພື່ອຊາວໜຸ່ມ ແລະເຍົາວະຊົນ ຂອງອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ ໄດ້ພຍາຍາມເຮັດໃຫ້ສູນວັທນະທັມລາວແຫ່ງນີ້ ເກີດມີສະພາບແວດລ້ອມທີ່ປອດພັຍ ແລະເປັນສະຖານທີ່ ທີ່ບັນດາເດັກນ້ອຍເຍົາວະຊົນສາມາດຮຽນຮູ້ໄດ້ ຕລອດການສ້າງກິຈກັມ ແລະການເຄື່ອນໄຫວຕ່າງໆ ແລະສາມາດ ຜັນຂຍາຍຄວາມຮູ້ຄວາມສລາດຂອງເຂົາເຈົ້າ ເຂົ້າໃນວຽກງານພາສາ ແລະວັທນະທັມລາວ. ພວກເຮົາຫວັງຈະປູກຝັງແຮງໜູນ ແລະກິຈກັມນອກຫຼັກສູດຕ່າງໆ ໄວ້ໃນຕົວຂອງເຂົາເຈົ້າ ທັງມີກໍເພື່ອຄວາມສຳເຣັດທາງ ດ້ານການສຶກສາຮ່ຳຮຽນ ແລະຊ່ວຍເຮັດໃຫ້ເຂົາເຈົ້າສ້າງໄດ້ ຄວາມ ສັມພັນອັນດີທີ່ມີຕໍ່ສິ່ງທີ່ເຂົາເຈົ້າໄດ້ເຮັດ.ອີກຣະດັບນຶ່ງ, ພວກເຮົາຫວັງວ່າ ຕລອດໄລຍະການເຂົ້າຮ່ວມໂຄງການນຳພວກເຮົາ, ພວກເຂົາເຈົ້າ ຈະຮູ້ສຶກເປັນໜີ້ບຸນຄຸນຕໍ່ປະຊາຄົມຂອງພວກເຂົາເຈົ້າ ແລະຈະຄືນໃຫ້ແກ່ສັງຄົມດ້ວຍການການຮັບໃຊ້ ແລະເຂົ້າຮ່ວມໃນຂບວນການ ການອາສາສມັກ. ດັ່ງໜາກຜົນທີ່ໄດ້ຮັບຈາກການປະກອບສ່ວນນຳກິຈກັມ ແລະຫຼັກສູດການສຶກສາຕ່າງໆ ຂອງໂຄງການ, ເດັກນ້ອຍເຍົາວະຊົນກໍໄດ້ມາຊຶ່ງຄວາມຊາບຊຶ້ງ ແລະຄວາມພາກພູມໃຈ ໃນມໍຣະດົກທາງດ້ານວັທນະທັມ ທັງຂອງສະຫະຣັຖ ແລະຂອງລາວ ຊຶ່ງໃນນັ້ນພວກເຂົາເຈົ້າ ຈະກາຍເປັນບຸກຄົນທີ່ຮູ້ ແລະສາມາດເສັຽສລະຄວາມຮູ້ ຄວາມສາມາດທາງດ້ານວັທນະທັມ ທີ່ຕົນເອງມີ ໃຫ້ແກ່ສັງຄົມໄດ້ຢ່າງຫຼາກຫຼາຍ.



ເຍົາວະຊົນຜູ້ນີ້ ໄດ້ເຂົ້າມາປະກອບສ່ວນນຳໂຄງການແລະໄດ້ຮຽນຮູ້ຫຼາຍຢ່າງດ້ວຍຕົວຂອງລາວເອງ.ຕໍ່ມາລາວສາມາດລຶງເຊືອກຫຼິ້ນນີ້ໄວ້ດົນນານ ແລະທຳສະຖິຕິໄດ້ຮອດ 22 ນາທີ.

## ກິຈກັມການເຄື່ອນໄຫວຕ່າງໆ

ກິຈກັມ ແລະການເຄື່ອນໄຫວຕ່າງໆທັງໝົດຂອງໂຄງການ ໄດ້ປິ່ນອ້ອມເປົ້າໝາຍທີ່ໄດ້ວາງໄວ້ ຊຶ່ງມີທັງການສ້າງຄວາມເບີກບານມ່ວນຊື່ນ, ການຕິດພັນ ແລະຜູກໝັ້ນໃຫ້ພັນທະປະຊາຄົມ. ການໄດ້ຮັບໂອກາດ ໃນການໄດ້ຮັບຣາງວັນ ຫຼືຂອງຂວັນ, ການໄດ້ໄປທ່ຽວທັສນະສຶກສາ ແລະຮຽນຮູ້ກັບສະພາບແວດລ້ອມ, ການຫຼິ້ນກິລາ, ການໄດ້ຮັບການຊ່ວຍເຫຼືອໃນການເຮັດການບ້ານ,ໄດ້ຮ່ຳຮຽນກ່ຽວກັບວັທນະທັມລາວ, ການໄດ້ໄປສແດງໂຊ໌ ແລະປະກອບສ່ວນໃນງານຕ່າງໆ, ການໄດ້ຮຽນຮູ້ກ່ຽວກັບການໄດ້ຮັບໃຊ້ຊ່ວຍເຫຼືອສັງຄົມ, ຮຽນຮູ້ກ່ຽວກັບພັນທະ ໜ້າທີ່ພົລເມືອງດີ ແລະອື່ນໆອີກຫຼາຍຢ່າງ.

## ເດັກນ້ອຍເຍົາວະຊົນ

ບັນດາເຍົາວະຊົນ ທີ່ມາຈາກປະຊາຄົມ ແລະໄດ້ເຂົ້າຮ່ວມນຳໂຄງການໄດ້ຖືກຈັດແບ່ງຕາມວັຍຂອງການສຶກສາຮອດຫ້ອງ 12 , ເປັນໝວດໝູ່ໂດຽການນຳພາຂອງນັກອາສາສມັກທີ່ຮູ້ໄດ້ດີຢ່າງເລິກເຊິ່ງ ແລະ ເຄີຽມີການພົວພັນເປັນຢ່າງດີກັບເດັກ.

## ບັນດານັກອາສາສມັກຕ່າງໆ

ໜຶ່ງໃນຮູບການທີ່ສຳຄັນກ່ອນໝູ່ໃນໂຄງການກໍຄື ການມີທີມງານ ທີ່ຫ້າວຫັນມ່ວນຊື່ນ ແລະມັກເຮັດວຽກກັບເດັກນ້ອຍເຍົາວະຊົນ. ນັກອາສາສມັກພວກເຮົາ ໄດ້ນຳເອົາບົດຮຽນ ແລະຄວາມສາມາດຕົວຈິງຫຼາກຫຼາຍມາຈາກປະຊາຄົມອ້ອມຂ້າງ. ສ່ວນຫຼາຍກໍເປັນນັກສຶກສາມະຫາວິທຍາລັຍ ແລະສ່ວນບຸກຄົນອື່ນໆທີ່ເຄີຽໄດ້ຮັບການບໍຣິການ ຈາກວຽກງານດັ່ງກ່າວມາກ່ອນ ໄດ້ຫວນຕ່າວກັບຄືນ ເພື່ອເປັນການຕອບແທນຄືນໃຫ້ແກ່ໂຄງການດັ່ງກ່າວ. ນັກອາສາສມັກເປັນ ເປັນຫົວຈັກຫຼັກແຫຼ່ງ ທີ່ຈະເຮັດໃຫ້ໂຄງການດັ່ງກ່າວກ້າວໄປຂ້າງໜ້າ.




ປຶ້ມນ້ອຍຫົວນີ້ ໄດ້ຖືກສ້າງຂຶ້ນໂດຽ ຊາວໜຸ່ມ ເດັກນ້ອຍເຍົາວະຊົນ
ແລະບັນດານັກອາສາສມັກ ໂດຽໄດ້ຮັບການຕື່ມເຕັມໃຫ້ສົມບູນແບບ
ຈາກພນັກງານ ແລະສະພາອຳນວຍການ ຂອງ
ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ

ກະລຸນາຕັດບ່ອນນີ້ອອກ ແລ້ວສົ່ງໄປພ້ອມກັບສິ່ງທີ່ທ່ານໃຫ້ການບໍຣິຈາກ

## ໃບບໍຣິຈາກ

ໂຄງການເພື່ອຊາວໜຸ່ມ ແລະເຍົາວະຊົນໄດ້ກາຍປະກົດການ ທີ່ພົ້ນເດັ່ນຂຶ້ນໃນສັງຄົມລາວໃນປະຈຸບັນ ໂດຽການທຸ່ມເທເຫື່ອແຮງຂອງ ບັນດານັກອາສາສມັກ ໂດຽສະເພາະຕົ້ນຕໍ ກໍເປັນການສານຕໍ່ນະໂຍບາຍທີ່ມີມາຂອງບັນດານັກຮຽນນັກສຶກສາລາວ ຈາກມະຫາວິທຍາລັຍມີນີໂຊຕາ ບົນພື້ນຖານການເອື້ອອຳນວຍ ແລະການໃຫ້ຄວາມສດວກທາງດ້ານປັດຈັຍຕ່າງໆ ໃນການເຄື່ອນໄຫວວຽກງານ ຈາກສູນວັທນະທັມລາວ ກໍຄື ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ. ທຶນຮອນບາງສ່ວນ ທີ່ໄດ້ຮັບຈາກກອງທຶນມູນນິທິ ແລະຈາກການຫາຣາຍໄດ້ເອົາເອງຂອງເຂົາເຈົ້າ ໂດຽການຂາຍເຄື່ອງເກົ່າຕ່າງໆ ທີ່ຜ່ານມາກໍບໍ່ອາດສນອງໄດ້ ຢ່າງພຽງພໍ ກັບຄວາມຮຽກຮ້ອງຕ້ອງການຂອງໂຄງການ. ບົນພື້ນຖານຂອງສະພາບການຕ່າງໆ ໃນປະຈຸບັນ, ການຮັບເອົາການຊ່ວຍເຫຼືອຈາກທ່ານບໍ່ວ່າທາງດ້ານວັດຖຸປັດ ຈັຍ, ການເສັຽສລະເປັນນັກອາສາສມັກຂອງທ່ານຍິ່ງມີຄວາມໝາຍສຳຄັນສຳລັບໂຄງການນີ້.

☐ ຂ້າພະເຈົ້າມີຄວາມຍິນດີ ທີ່ຢາກຈະຊ່ວຍໂຄງການເພື່ອຊາວໜຸ່ມແລະເຍົາວະຊົນ ຂອງອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ ດ້ວຍປັດຈັຍວັດຖຸສິ່ງຂອງ ຫຼືການອາສາສມັກ

☐ ຂ້າພະເຈົ້າມີຄວາມຍິນດີ ທີ່ຢາກຈະຊ່ວຍໂຄງການເພື່ອຊາວໜຸ່ມແລະເຍົາວະຊົນ ຂອງອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ ດ້ວຍປັດຈັຍເງິນ

ຂໍຂອບໃຈນຳທ່ານ
ທີ່ໃຫ້ການສນັບສນູນ

ວັນທີ___________________

ຊື່ ແລະນາມສະກຸນຂອງທ່ານ______________________________

______________________________________________

ທີ່ຢູ່ຂອງທ່ານ______________________________________

______________________________________________

______________________________________________

ຈຳນວນເງິນທີ່ທ່ານບໍຣິຈາກ: $___________________________

Please make a check payable to:
Lao Advancement Organization of America

ໃນການບໍຣິຈາກແຕ່ລະເທື່ອຂອງທ່ານ ອົງການລາວເພື່ອຄວາມກ້າວໜ້າໃນສະຫະຣັຖ
ຈະອອກໜັງສືຍົກເວັ້ນພາສີໃຫ້ທ່ານ ໃນການປະກອບພາສີຣາຍໄດ້ໃນທ້າຍປີ

**ອົງການລາວເພື່ອຄວາມກ້າວໜ້າ ໃນສະຫະຣັຖ**

**ໂຄງການເພື່ອຊາວໜຸ່ມ ແລະເຍົາວະຊົນ**

**ສູນວັທນະທັມລາວ**

2648 West Broadway Avenue
Minneapolis, Minnesota 55411

ໂທຣະສັບ: 612.302.9048
ໂທຣະສານ: 612.522.2431
ອີເມລ: laoamerica@laoamerica.org
ແວັບໄຊທ໌: laoamerica.org